ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ເຊລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 0525/ເຊ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 23/03/2020

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດຕະຫຼາດຫຼັກຊັບລາວ ຈຳກັດ

ທີ່ນັບຖື

ເລື້ອງ: ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 1/2020.

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ເຊລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສະພາ ບໍລິຫານສະໄໝສາມັນ ຄັ້ງທີ 1/2020 ວັນທີ 20 ມີນາ 2020, ມີລາຍລະອຽດລຸ່ມນີ້:

1. ອະນຸມັດການຄັດເລືອກເອົາສະພາບໍລິຫານຊຸດໃໝ່ ເພື່ອປ່ຽນແທນສະພາບໍລິຫານຊຸດເກົ່າທີ່ຄົບອາຍຸການ ຄື:

1.	ທ່ານ ປອ. ຄຳມະນີ ອິນທິລາດ	ປະທານສະພາບໍລິຫານ
2.	ທ່ານ ບຸນອູ້ມ ສີວັນເພັ່ງ	ຮອງປະທານສະພາບໍລິຫານ
3.	ທ່ານ ນາງ ລັດຕະນາ ປະທຸມວັນ	ກຳມະການສະພາບໍລິຫານ
4.	ທ່ານ ຄຳເພັ່ງ ທິນນະກອນ	ກຳມະການສະພາບໍລິຫານ
5.	ທ່ານ ສົມພິດ ແກ້ວວິຈິດ	ກຳມະການສະພາບໍລິຫານ
6.	ທ່ານ ໂກມົນຈິນ ເພັດອາສາ	ກຳມະການສະພາບໍລິຫານ
7.	ທ່ານ ຄຳແກ້ວ ວິສີສົມບັດ	ກຳມະການສະພາບໍລິຫານອິດສະຫຼະ
8.	ທ່ານ ນາງ ທະວີຈັນ ທ່ຽງເທບວົງສາ	ກຳມະການສະພາບໍລິຫານອິດສະຫຼະ
9.	ທ່ານ ຣສ. ປອ ພູເພັດ ກ້ຽວພິລາວົງ	ກຳມະການສະພາບໍລິຫານອິດສະຫຼະ

ແລະ ກຳນົດລາຍຊື່ຜູ້ອຳນວຍການ ທີ່ມີອຳນາດລົງລາຍເຊັນຜູກພັນບໍລິສັດ ດັ່ງນີ້:

1. ປະທານສະພາບໍລິຫານ ຫລື ຮອງປະທານສະພາບໍລິຫານ ຫລື ຜູ້ອຳນວຍການໃຫຍ່ ເປັນຜູ້ ລົງລາຍເຊັນ ແລະ ປະທັບກາບໍລິສັດແຕ່ຝ່ຽງຜູ້ດຽວ; ຫລື
2. ໃຫ້ຜູ້ອຳນວຍການອື່ນສອງທ່ານ ລົງລາຍເຊັນຮ່ວມກັນ ແລະ ປະທັບກາບໍລິສັດ.

ແລະ ໃຫ້ນຳເລື່ອງນີ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ເພື່ອພິຈາລະນາອະນຸມັດ.

2. ອະນຸມັດການດັດແກ້ກົດລະບຽບຂອງບໍລິສັດ ມາດຕາ 4 ວ່າດ້ວຍທີ່ຕັ້ງສຳນັກງານໃຫຍ່ ແລະ ສາຂາ ແລະ ມາດຕາ 9 ວ່າດ້ວຍຜູ້ອຳນວຍການ ດັ່ງນີ້:

1) **ດັດແກ້ມາດຕາ 4 ວ່າດ້ວຍທີ່ຕັ້ງສຳນັກງານໃຫຍ່ ແລະ ສາຂາ:** ເພີ່ມ ເຂື່ອນໄຟຟ້າເຊເສັດ 3, ເຂື່ອນໄຟຟ້ານ້ຳຄານ 3 ແລະ ເຂື່ອນໄຟຟ້ານ້ຳຈຽນ, ເນື່ອງຈາກວ່າ ຜ-ຟຟລ ໄດ້ສຳເລັດການໂອນເຂື່ອນຈາກລັດວິສາຫະກິດໄຟຟ້າລາວ.
2) **ດັດແກ້ມາດຕາ 9 ວ່າດ້ວຍຜູ້ອຳນວຍການ:** ປ່ຽນຊື່ ແລະ ຂໍ້ມູນຂອງສະພາບໍລິຫານຊຸດໃໝ່ ເພື່ອປ່ຽນແທນສະພາບໍລິຫານຊຸດເກົ່າທີ່ຄົບວາລະ.

ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼືບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ໃນເລື້ອງດັ່ງກ່າວຂ້າງເທິງ ລວມທັງມີອຳນາດດັດແກ້ເນື້ອໃນກົດລະບຽບຂອງບໍລິສັດຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ/ຫຼື ເຈົ້າໜ້າທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວມີຄຳແນະນຳ ແລະ/ຫຼືຄຳສັ່ງໃຫ້ດັດແກ້.

3. ກຳນົດວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019, ມີລາຍລະອຽດດັ່ງນີ້:

ວາລະທີ 1: ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຜ່ານມາ.
ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018.
ວາລະທີ 3: ພິຈາລະນາ ແລະ ຮັບຮອງລາຍງານການເງິນ 6 ເດືອນຕົ້ນປີ 2019 ແລະ ການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2019.
ວາລະທີ 4: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2019 ລວມທັງລາຍງານການເງິນຂອງບໍລິສັດ ປີ 2019 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດປີ 2020.
ວາລະທີ 5: ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2019.
ວາລະທີ 6: ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປີ 2020-2022.
ວາລະທີ 7: ພິຈາລະນາ ແລະ ອະນຸມັດເປ້ຍປະຊຸມສະພາບໍລິຫານ, ກອງເລຂາສະພາບໍລິຫານ, ແລະ ແຂກທີ່ຖືກເຊີນເຂົ້າຮ່ວມກອງປະຊຸມສະພາບໍລິຫານ.
ວາລະທີ 8: ພິຈາລະນາ ແລະ ຮັບຮອງເອົາສະພາບໍລິຫານຊຸດໃໝ່ ເພື່ອປ່ຽນແທນສະພາບໍລິຫານຊຸດເກົ່າທີ່ຄົບອາຍຸການ.
ວາລະທີ 9: ພິຈາລະນາ ແລະ ອະນຸມັດການດັດແກ້ກົດລະບຽບ ຂອງບໍລິສັດ ມາດຕາ 4 ວ່າດ້ວຍທີ່ຕັ້ງສຳນັກງານໃຫຍ່ ແລະ ສາຂາ ແລະ ມາດຕາ 09 ວ່າດ້ວຍ ຜູ້ອຳນວຍການ.

ດັ່ງນັ້ນ ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,
ກຳມະການສະພາບໍລິຫານ/ຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ລັດຕະນາ ປະທຸມວັນ